Minnesota Department of Health • ໃບຂໍ້ມູນກ່ຽວກັບການກໍ່ການຮ້າຍຊີວະວິດທະຍາ 11/2/2005

# ໂຣຄ໌ "ແອນແທຣດ" (ໂຣຄ໌ຕິດຮ້າຍແຮງໃນສັດລ້ຽງ)

## ໂຣຄ໌ "ແອນແທຣດ" ແມ່ນຫຍັງ?

ໂຣຄ໌ "ແອນແທຣດ" ເປັນໂຣກທີ່ເກີດມາຈາກ "ແບກທີເຣັຽ" ຊະນິດນຶ່ງ. ໂຣຄ໌ນີ້ຈະທຳໃຫ້ທ່ານປ່ວຽໄຂ້ໄດ້ຫລາຍແບບ ແລ້ວແຕ່ທ່ານ ຕິດພະຍາດມາໃນແບບໃດ. ມັນອາດຈະມາເປັນແບບທີ່ເປັນແຜຕາມຜິວໜັງ ຫລືແບບຖ່າຍທ້ອງຢ່າງແຮງ ຄ້າຍຄືໃນເວລາເບື່ອອາຫານ. ອີກແບບນຶ່ງກໍຄືທາງລະບົບຫາຍໃຈ ເພາະການຫາຍໃຈເອົາເຊື້ອໂຣກເຂົ້າທາງການຫາຍໃຈ. ຕາມທັມດາແລ້ວອາການຈະປະກົດໃຫ້ເຫັນພາຍໃນ 7 ວັນ (ສ່ວນຫຼາຍແມ່ນ ລະຫວ່າງ 2 ສອງ ຫາ 5 ວັນ) ຫລັງຈາກທ່ານຕິດພະຍາດມາ. ອາການຈະຂະຫຍາຍໄປຫລາຍແບບ ແລ້ວ ແຕ່ພະຍາດ:



*ເຊື້ອໂຣກແອນແທຣດ*

- **ພະຍາດ "ແອນແທຣດ" ຕາມຜິວໜັງ** ຈະເລີ່ມດ້ວຽ ຜິວໜັງໂນຂື້ນມາ. ພາຍໃນນຶ່ງຫາສອງວັນ ບ່ອນທີ່ໂນນັ້ນ ກໍ່ຈະໂພງຂື້ນເປັນຕຸ່ມ ມີນ້ຳຫນອງ ແລ້ວກາຍເປັນແຜ ມີໜອງແຕ່ບໍ່ເຈັບ ທັງກາງນັ້ນຈະເປັນສີດຳ. ພົກນ້ຳເຫລືອງຢູ່ໄກ້ບ່ອນປາກບາດນັ້ນຈະໂພງຂື້ນ. ພະຍາດ "ແອນແທຣດ" ທີ່ຜິວໜັງນີ້ປິ່ນປົວໄດ້ງ່າຍ ໂດຍໄຊ້ຢາຕ້ານເຊື້ອໂຣກ.

- **ພະຍາດ "ແອນແທຣດ" ໃນລຳໄສ້** ບໍ່ຄ່ອຍມີເລື້ອຽປານໃດ. ມັນຈະເລີ່ມຈາກການເປັນວິນຫົວ, ບໍ່ຢາກກິນເຂົ້າ, ຮາກ ແລະ ຖືຄີງໄຂ້. ອາການເຫລົ່ານີ້ ຕໍ່ມາຈະມີ ການເຈັບທ້ອງ, ຮາກອອກເລືອດ, ແລະຖ່າຍທ້ອງຢ່າງແຮງ. ຖ້າເປັນພະຍາດ "ອັນທຣັກ" ໃນລຳໄສ້ນັ້ນ, ສຳຄັນທີ່ທ່ານຈະຕ້ອງໄປຮັບການປິ່ນປົວໂດຍໄຊ້ຢາຕ້ານເຊື້ອໂຣກແຕ່ຫົວທີ.

- **ພະຍາດ ""ແອນແທຣດ" ທາງລະບົບຫາຍໃຈ** ຈະເລີ່ມດ້ວຍອາການຄືກັນກັບຕອນເປັນໄຂ້ຫວັດໃຫຍ່ (ໄອ, ຖືຄີງ, ປວດກ້າມເນື້ອ). ອາການເຫລົ່ານີ້ຈະເປັນຢູ່ ສອງຫາສາມວັນ, ແລ້ວຈະຫາຍໄປ ວັນນຶ່ງຫລືສອງວັນ. ຕໍ່ມາບາງເທື່ອ ອາການເຈັບກໍ່ຈະຄືນມາອີກ, ໃນແບບເຈັບປອດ, ຫາຍໃຈຝືດ, ແລະຕົກໃຈເປັນລົມ. ຖ້າຫາກບໍ່ໄດ້ຮັບການປິ່ນປົວ, ພະຍາດ "ແອນແທຣດ" ທາງລະບົບຫາຍໃຈ ອາດເປັນອັນຕະຣາຍ ຄືເຖິງແກ່ຄວາມຕາຍ 90 ເປີເຊັນຂອງ 100 ເປີເຊັນຂອງຜູ້ທີ່ຕິດພຍາດ. ຍ້ອນວ່າມີການປິ່ນປົວ, ພະຍາດ "ແອນແທຣດ" ທີ່ລະບາດໃນປີ 2001 ນັ້ນມີອັດຕຣາເສັຍຊີວິດຢູ່ປະມານ 40 ເປີເຊັນ.

## ຕິດໂຣກ "ແອນແທຣດ" ໄດ້ຢ່າງໃດ?

ຕອນມັນຢູ່ນອກຮ່າງກາຍຄົນ ແມ່ພະຍາດ "ແອນແທຣດ" ຈະເປັນກ້ອນແຂງ ທີ່ເອີ້ນວ່າ "ສະປໍ". ຕອນນັ້ນ ແມ່ພະຍາດ "ແອນແທຣດ" ນີ້ຂ້າໄດ້ຍາກ. ກ້ອນ "ສະປໍ" ນັ້ນ ຢູ່ຕາມທັມຊາດໃນພື້ນດິນ ແລະຈະມີຊີວິດຢູ່ໄດ້ຫລາຍປີ. ສັດຕ່າງໆ ເຊັ່ນງົວຄວາຍ, ແກະ, ມ້າ ແລະແບ້ ກໍ່ສາມາດຕິດ ແມ່ພະຍາດໄດ້ ຖ້າມາເລືອຢູ່ຕາມດິນເປັນເວລານານ.

ສ່ວນຄົນຈະຕິດແມ່ພະຍາດ "ແອນແທຣດ" ໄດ້ ຖ້າມາເກື້ອກົ້ວຢູ່ກັບສັດທີ່ຕິດແມ່ພະຍາດມາແລ້ວ, ຫລືຖ້າໄປຈັບບາຍຂົນສັດ ຫລື ຜົນຜະລິດອື່ນໆຂອງສັດທີ່ຕິດພະຍາດມາ, ຫລື ກິນຊີ້ນສັດທີ່ມີເຊື້ອພະຍາດ. ການຕິດພະຍາດ "ແອນແທຣດ" ໂດຍທັມຊາດ ຢູ່ໃນສຫະຣັຖອາເມຣິການັ້ນຈະມີນ້ອຍທີ່ສຸດ.

ຕອນພະຍາດ "ອັນທຣັກ" ລະບາດໃນປີ 2001 ນັ້ນ ຄົນທັງຫລາຍຕິດເຊື້ອ "ແອນແທຣດ" ທາງຮູຂົນແລະທາງຜິວໜັງ ຍ້ອນວ່າເຂົາເຈົ້າໄດ້ຈັບເຄື່ອງຝາກທາງໄປສນີທີ່ປະປົນພະຍາດແລ້ວ. ບາງຄົນກໍເປັນຫ່ວງວ່າເຊື້ອພະຍາດນີ້ ອາດຖືກປ່ອຍອອກໄປຕາມອາກາດ ຢູ່ບ່ອນທີ່ມີຊຸມຊົນຢູ່. ການກະທຳເຊັ່ນນັ້ນກໍ່ຈະທຳໃຫ້ຄົນຈຳນວນຫຼວງຫຼາຍຕິດພະຍາດ "ແອນແທຣດ" ທາງການຫາຍໃຈໄດ້.

## ທ່ານຈະຕິດໂຣກຈາກບຸກຄົນຜູ້ອື່ນໄດ້ບໍ?

*ບໍ່ໄດ້!* ທ່ານຕິດໄດ້ ຈາກການຫາຍໃຈເອົາ "ສະປໍ", ຫຼືກິນຊີ້ນທີ່ມີພະຍາດຕິດຢູ່ ຫລືປ່ອຍໃຫ້ "ສະປໍ" ເຂົ້າມາຖືກກັບຜິວໜັງຂອງທ່ານເທົ່ານັ້ນ. ຄົນທີ່ເປັນພະຍາດ "ແອນແທຣດ" ແລ້ວຈະບໍ່ສາມາດ ແຜ່ລະບາດໂຣກໃຫ້ຜູ້ອື່ນຕິດນຳໄດ້.

## ເປັນຫຍັງ ຈຶ່ງຄິດວ່າພະຍາດນີ້ຈະຖືກເອົາໄປໃຊ້ເປັນອາວຸດ ເພື່ອທຳການກໍ່ການຮ້າຍໄດ້?

ພະຍາດ "ແອນແທຣດ" ເຄີຍຖືກໄຊ້ເປັນອາວຸດມາກ່ອນ, ຕອນມີການລອບທຳຮ້າຍກັນ ໃນເດືອນ ອົກໂຕເບີ, ປີ 2001 ຕອນນັ້ນ ຄົນຮ້າຍໄດ້ເອົາພະຍາດຕິດໃສ່ໃນເຄື່ອງສົ່ງຜ່ານທາງໄປສນີໂດຍການຫວ່ານເຊື້ອໂຣກ "ແອນແທຣດ". ໃສ່ສິ່ງຂອງນັ້ນ, ມີຄົນຊາວສອງຄົນໄດ້ຕິດເຊື້ອໂຣກ "ແອນແທຣດ" ຫ້າຄົນໃນຈຳນວນນັ້ນໄດ້ເສັຽຊີວິດຍ້ອນ.

ເປັນທີ່ຮູ້ຈັກກັນອີກວ່າ ທັງອາເມຣິກາ ແລະທັງໂຊຫວຽດກໍ່ເຄີຍໄດ້ຄົ້ນຄວ້າການໄຊ້ເຊື້ອໂຣກ "ແອນແທຣດ" ນີ້ເປັນອາວຸດ. ເປັນທີ່ຄາດຄະເນໄດ້ວ່າປະຈຸບັນນີ້ ປະເທດອື່ນໆອີກຍັງອາດຈະພະຍາຍາມຕິດຕາມເບິ່ງເຣື່ອງນີ້ຕໍ່ໄປອີກຢູ່.

ພະຍາດ "ແອນແທຣດ" ມີລັກຊະນະຫລາຍຢ່າງ ທີ່ສູນກາງຄວບຄຸ້ມແລະປ້ອງກັນການຕິດຕໍ່ໂຣກ "ຢູແອສ ຊີ.ດີ.ຊີ" (CDC) ໄດ້ຄົ້ນຄວ້າວ່າມັນຈະເປັນອາວຸດຊະນິດນຶ່ງໄດ້ໃນການກໍ່ການຮ້າຍ ທາງດ້ານ ຊີວະວິທຍາ, ຄືວ່າ:

Communications Office
625 Robert Street/Box 64975
St. Paul, MN 55164-0975
(651) 201-4989
www.health.state.mn.us

- ເຖິງແມ່ນວ່າຈະບໍ່ຕິດລະບາດລະຫວ່າງຄົນກໍ່ດີ, ພະຍາດນັ້ນແຜ່ຂຫາຍໄປໄດ້ງ່າຍ
- ພະຍາດນັ້ນມີຜົນສະທ້ອນແກ່ສຸຂພາບຂອງຄົນເປັນຢ່າງແຮງ, ພ້ອມທັງຈະທໍາໃຫ້ຄົນເຈັບຕາຍໃນອັດຕຣາສູງໄດ້
- ພະຍາດນັ້ນ ພາໃຫ້ມີການເກີດການຫວັ່ນວິຕົກຢ່າງໃຫຍ່ຫລວງ ພ້ອມທັງສ້າງຄວາມວຸ່ນວາຍດ້ານສັງຄົມອີກ
- ຈໍາເປັນຕ້ອງພິຈາຣະນາຢ່າງຮອບຄອບໃນການຕຽມຮັບການລະບາດພະຍາດນີ້ ໃນເວລາມັນລະເບີດຂື້ນມາ

## "ແອນແທຣດ" ປິ່ນປົວໄດ້ບໍ?

ພະຍາດ "ແອນແທຣດ" ທຸກໆແບບປິ່ນປົວໄດ້ໂດຍໄຊ້ຢາຕ້ານເຊື້ອ. ສໍາຄັນທີ່ຕ້ອງເລີ່ມການປິ່ນປົວໄວເທົ່າທີ່ຈະໄວໄດ້. ບາງເທື່ອກໍ່ອາດຈະຊ່ວຍຕ້ານທານພະຍາດນີ້ໄດ້ ຖ້າຜູ້ທີ່ຕິດພະຍາດນັ້ນ ຫາກ ເລີ່ມໄດ້ຮັບການປິ່ນປົວຢ່າງໄວທັນເວລາ.

## "ແອນແທຣດ" ປ້ອງກັນໄດ້ບໍ?

ການປິ່ນປົວພະຍາດແຕ່ຫົວທີ ໂດຍໄຊ້ຢາຕ້ານເຊື້ອໂຣກ, ສໍາລັບຄົນທີ່ຕິດພະຍາດນີ້ມາແລ້ວ ເປັນວິທີທີ່ຈະຊ່ວຍປ້ອງກັນຫລີກລ້ຽງທີ່ດີທີ່ສຸດ.

ຍັງມີຢາສັກ "ວັກຊີນ" ຕ້ານເຊື້ອ "ແອນແທຣດ" ທີ່ເຄີຍສັກໃຫ້ທະຫານນັ້ນໄດ້ຜົນດີ. ຈະຕ້ອງສັກຫົກເຂັມເພື່ອປ້ອງກັນໂຣກ ແລ້ວແຕ່ລະປີຕ້ອງສັກເພີ່ມອີກ. ແຕ່ວ່າຢາສັກແບບນີ້ມີຈໍານວນໜ້ອຍ ບໍ່ມີພຽງພໍກັນເທື່ອໃຫ້ທ່ານໝໍຝ່າຍພົນລະເຮືອນໄຊ້. ຢາສັກນີ້ກໍ່ເໝືອນຢາສັກອື່ນໆທີ່ອາດຈະມີອາການຂ້າງຄຽງບາງຢ່າງ. ປະຈຸບັນຍັງບໍ່ທັນຮູ້ໄດ້ແນ່ວ່າຢາທີ່ຜະລິດຕຽມໄວ້ນັ້ນມີຈໍານວນນ້ອຍຫຼາຍພຽງໃດຖ້າເກີດມີຄວາມຕ້ອງການຂື້ນມາ, ແລະຈະໄປເອົາໄດ້ຢູ່ໃສ ຖ້າຫາກເກີດມີເຫດການເກີດຂື້ນມາ. ຍ້ອນເຫດຜົນເຫລົ່ານີ້ ການສັກຢາໃຫ້ແກ່ປະຊາຊົນທົ່ວໄປ ປະຈຸບັນນີ້ຈຶ່ງບໍ່ຖືກແນະນໍາເອົາມາໄຊ້.

## ຄວນໃຊ້ຢາຕ້ານເຊື້ອໂຣກອື່ນໆປ້ອງກັນໄດ້ບໍ?

ບໍ່ຄວນ! ການເອົາຢາຕ້ານເຊື້ອໂຣກມາສັກປ້ອງກັນໄວ້ກ່ອນ ອາດເປັນອັນຕະລາຍ. ຢາຕ້ານເຊື້ອໂຣກເຫຼົ່ານັ້ນອາດມີພິດແລະມີຜົນ ສະທ້ອນຂ້າງຄຽງຢ່າງອື່ນທີ່ເປັນອັນຕະຣາຍ, ໂດຍສະເພາະຜູ້ທີ່ຖືພາ, ເດັກນ້ອຍ, ແລະຜູ້ທີ່ມີອາການແພ້ຢາຕ້ານເຊື້ອໂຣກນັ້ນ. ນອກນັ້ນການໄຊ້ຢາຕ້ານເຊື້ອໂຣກຫຼາຍເກີນສ່ວນກໍ່ຈະເປັນການປູກແນ່ພະຍາດໃຫ້ແຮງຂື້ນຈົນບໍ່ສາມາດຈະໃຊ້ຢາຕ້ານເຊື້ອໂຣກອື່ນໆມາຂ້າມັນໄດ້.

ສໍານັກງານສາທາຣະນະສຸຂ, ໂຮງພະຍາບານ, ແລະສະຖານຮັກສາພະຍາບານທົ່ວຣັຖມິນນີໂຊຕາ ຕຽມພ້ອມຢູ່ຕລອດເວລາເພື່ອຕິດຕາມເບິ່ງການເຄື່ອນໄຫວທີ່ຜິດປົກກະຕິຕ່າງໆຂອງເຊື້ອໂຣກພ້ອມທັງການທີ່ຄິດວ່າຈະລອບໂຈມຕີທີ່ໄຊ້ແນ່ພະຍາດ "ແອນແທຣດ" ເປັນເຄື່ອງມື. ຖ້າຫາກສືບຮູ້ວ່າມີແຜນໃຊ້ແນ່ພະຍາດ "ແອນແທຣດ" ໃຫ້ກໍ່ລະບາດຂື້ນ, ກະຊວງສາທາຣະນະສຸຂ ຣັຖມິນນີໂຊຕາ ແລະໜ່ວຍງານສາທາຣະນະສຸຂ ແຕ່ລະທ້ອງທີ່ ກໍ່ຈະມີການດໍາເນີນງານຢ່າງທັນທີ. ໜ່ວຍງານເຫລົ່ານັ້ນຈະຕ້ອງສືບສວນຄົ້ນຄ້ວວ່າມີໃຜແດ່ຖືກແນ່ພະຍາດຕິດລະບາດມາ ພ້ອມທັງ ພະຍາຍາມແຈກຢາຕ້ານເຊື້ອໂຣກແກ່ຜູ້ທີ່ຕ້ອງການໃຫ້ທັນການ.

## ມີການທົດສອບ ໂຣກ "ແອນແທຣດ" ຫລື ການຕິດລະບາດກັບ "ແອນແທຣດ" ບໍ?

ພະຍາດ "ແອນແທຣດ" ທາງລະບົບຫາຍໃຈ, ຕາມທັມດາແລ້ວກວດພົບໄດ້ ໂດຍກວດແນ່ພະຍາດ "ແອນແທຣດ" ຢູ່ໃນເລືອດ, ຫລືຢູ່ນໍານໍ້າທີ່ໄຫລອອກມາຈາກປອດ ຫລືຊ່ອງຫາຍໃຈ. ພະຍາດ "ແອນແທຣດ" ທາງຜິວໜັງ ກວດພົບໄດ້ຍ້ອນການທົດສອບ ຫລືກວດເບິ່ງຜິວໜັງ.

**ບໍ່ມີການກວດວິຈັຍໃດໆ ທີ່ຈະບອກໃຫ້ໄດ້ວ່າທ່ານໄດ້ຕິດແນ່ພະຍາດ "ແອນແທຣດ" ແລ້ວ.**

## ຂ້ອຍຈະເຮັດຢ່າງໃດ ຖ້າຂ້ອຍຄິດວ່າຕິດ "ແອນແທຣດ" ແລ້ວ?

ຖ້າທ່ານພົບເຫັນເຫດການທີ່ໜ້າສົງໄສ ຫລືເຫັນການເຄື່ອນໄຫວຂອງບຸກຄົນທີ່ຢູ່ໃນເຂດຄຸ້ມວົງສັງຄົມຂອງທ່ານ, ລວມທັງເຊັ່ນ ຄິດວ່າເຂົາອາດຈະມີການຜະລິດເຊື້ອໂຣກເພື່ອຈະນໍາໄປໃຊ້ແທນເປັນອາວຸດ, ໃຫ້ແຈ້ງກັບເຈົ້າໜ້າຕໍາຣວດໃນທ້ອງທີ່ຂອງທ່ານທັນທີ.

ຈະບໍ່ມີທາງຮູ້ໄດ້ຢ່າງໝັ້ນໃຈ ຖ້າວ່າທ່ານໄດ້ຕິດເຊື້ອ ແອນແທຣດແລ້ວ ແຕ່ຖ້າທ່ານຄິດວ່າຕົນເອງຕິດເຊື້ອ "ແອນແທຣດ" ແລ້ວຫຼືມີຄວາມເປັນຫວ່ງເປັນໃຍນໍາເຣື່ອງສຸຂພາບຂອງທ່ານ. ທ່ານຕ້ອງໄປຫາໝໍຜູ້ປະຈໍາຕົວຂອງທ່ານທັນທີ.
ຖ້າທ່ານມີຄວາມກັງວົນຫຼືໂສກເສົ້າກັບເຣື່ອງການໃຊ້ເຊື້ອໂຣກເປັນອາວຸເພື່ອທໍາການກໍ່ການຮ້າຍນັ້ນ, ທ່ານຄວນຈະໄປພົບທ່ານຫມໍຝ່າຍໂຣກຈິຕ.